ສາທາລະນະລັດປະຊາທິປະໄຕປະຊາຊົນລາວ
ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນະຖາວອນ
**********

ກະຊວງການເງິນ
ກົມພາສີ

ເລກທີ 02948 /ກພສ
ນະຄອນຫຼວງວຽງຈັນ, ວັນທີ 08 JUN 2018

## ແຈ້ງການແນະນຳ

ເຖິງ: - ຫົວໜ້າກອງຄຸ້ມຄອງພາສີ V
- ຫົວໜ້າດ່ານພາສີຊາຍສາກົນຂົວມິດຕະພາບ 1

ເລື່ອງ: ການປັບປຸງຂອດຂັ້ນແລະກົນໄກການຄຸ້ມຄອງການນຳເຂົ້າຊົ່ວຄາວຕູ້ສິນຄ້າເປົ່າຜ່ານດ່ານພາສີສາກົນຂົວມິດຕະພາບ 1

- ອີງຕາມ ກົດໝາຍວ່າດ້ວຍພາສີສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011 ແລະກົດໝາຍວ່າດ້ວຍພາສີສະບັບປັບປຸງສະບັບເລກທີ 057/ສພຊ, ລົງວັນທີ 24 ທັນວາ 2014;
- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີສະບັບເລກທີ02/ນຍ, 01.02.2018ວ່າດ້ວຍການປັບປຸງລະບຽບການແລະກົນໄກປະສານງານໃນການດຳເນີນທຸລະກິດຢູ່ສປປລາວ;
- ອີງຕາມ ບົດບັນທຶກກອງປະຊຸມປຶກສາຫາລືລະຫວ່າງກົມພາສີແລະພາກທຸລະກິດຄັ້ງວັນທີ 30.04.2018;
- ອີງຕາມ ບົດບັນທຶກການລົງເຮັດວຽກຂອງຄະນະວິຊາການກົມພາສີທີ່ດ່ານພາສີສາກົນຂົວມິດຕະພາບ 1 ໃນລະຫວ່າງວັນທີ 15 – 16.05.2018ສະບັບເລກທີ 00722/ພສ.ຂມພ 1, ລົງວັນທີ 21.05.2018;

ໃນໄລຍະຜ່ານມາໄດ້ມີຜູ້ປະກອບການຈຳນວນນຶ່ງສະເໜີຕໍ່ກົມພາສີກ່ຽວກັບການຄຸ້ມຄອງການນຳເຂົ້າຊົ່ວຄາວຕູ້ສິນຄ້າເປົ່າທີ່ນຳເຂົ້າມາບັນຈຸສິນຄ້າຢູ່ພາຍໃນແລ້ວຂົນສົ່ງອອກຄືນຜ່ານດ່ານພາສີສາກົນຂົວມິດຕະພາບ 1 ເຊິ່ງເຫັນວ່າຊັກຊ້າຫຍຸ້ງຍາກ, ມີຫຼາຍຂອດຂັ້ນ ແລະ ສົ່ງຜົນກະທົບຕໍ່ການສົ່ງອອກຂອງຜູ້ປະກອບການ.

ເພື່ອແກ້ໄຂບັນຫາດັ່ງກ່າວໃຫ້ທັນກັບສະພາບການ ກົມພາສີມອບຄວາມຮັບຜິດຊອບໃຫ້ກອງກວດຄຸ້ມຄອງພາສີ V ຊີ້ນຳດ່ານພາສີສາກົນຂົວມິດຕະພາບ 1 ປະຕິບັດດັ່ງນີ້:

1. ມອບໃຫ້ດ່ານພາສີສາກົນຂົວມິດຕະພາບ 1 ເປັນເຈົ້າການແກ້ໄຂປັບປຸງຂັ້ນຕອນການຄຸ້ມຄອງການນຳເຂົ້າຊົ່ວຄາວຕູ້ບັນຈຸສິນຄ້າໃຫ້ມີຄວາມກະທັດຮັດ, ວ່ອງໄວ ແລະ ສອດຄ່ອງກັບກົດໝາຍພາສີ.
2. ການນຳເຂົ້າຊົ່ວຄາວຕູ້ສິນຄ້າເປົ່າຂອງແຕ່ລະບໍລິສັດແມ່ນໃຫ້ປະຕິບັດຕາມ ມາດຕາ 27 ຂອງກົດ ໝາຍວ່າດ້ວຍພາສີ ສະບັບເລກທີ: 04/ສພຊ, ລົງວັນທີ 20 ທັນວາ, ຊຶ່ງບໍລິສັດນຳເຂົ້າຕ້ອງສະເໜີຫາດ່ານພາສີສາກົນຂົວມິດຕະພາບ 1 ເພື່ອພິຈາລະນາອະນຸມັດໃຫ້ນຳເຂົ້າຊົ່ວຄາວ ໂດຍມອບສິດໃຫ້ຫົວໜ້າໜ່ວຍງານເປັນຜູ້ຄຸ້ມຄອງ ແລະ ເຊັນອະນຸມັດ ບໍ 7 ໃຫ້ຕູ້ບັນຈຸສິນຄ້ານຳເຂົ້າຊົ່ວຄາວຕາມລະບຽບການ, ເດັດຂາດບໍ່ໃຫ້ດ່ານພາສີສາກົນຂົວ

ມິດຕະພາບ 1 ຮຽກຮ້ອງໃຫ້ບໍລິສັດຜູ້ນຳເຂົ້າເຮັດໃບສະເໜີເປັນແຕ່ລະຄັ້ງ ຫຼື ຖ້ຽວ ຊຶ່ງເປັນສາເຫດເຮັດໃຫ້ຫຍຸ້ງຍາກ ແລະ ຊັກຊ້າ.

3. ດ່ານພາສີສາກົນຂົວມິດຕະພາບ 1 ຕ້ອງລົງຕິດຕາມກວດກາໜ່ວຍງານທີ່ຮັບຜິດຊອບອະນຸຍາດອອກ ບໍ 7, ຖ້າເຫັນວ່າບໍລິມາດໃນການນຳເຂົ້າຕູ້ບັນຈຸສິນຄ້າຫາກມີຈຳນວນຫລາຍ ໃຫ້ເປີດປື້ມອະນຸຍາດນຳໃຊ້ ບໍ 7 ເພີ່ມເຕີມເປັນແຕ່ລະບໍລິສັດ ແລະ ຈັດວາງພະນັກງານວິຊາການຜູ້ທີ່ຮັບຜິດຊອບໃຫ້ພຽງພໍກັບວຽກງານຕົວຈິງ.
4. ໃຫ້ເອົາໃຈໃສ່ເຜີຍແຜ່ລະບຽບການ ແລະ ຂັ້ນຕອນໃນການຄຸ້ມຄອງການນຳເຂົ້າ-ສົ່ງອອກຕູ້ບັນຈຸສິນຄ້າໃຫ້ຜູ້ປະກອບການຮັບຊາບ ແລະ ເຂົ້າໃຈ;ໄປຄ່ຽງຄູ່ກັບການອຳນວຍຄວາມສະດວກໃນການນຳເຂົ້າ-ສົ່ງອອກ, ຖ້າພົບເຫັນການກະທຳຜິດຕ້ອງໄດ້ປະຕິບັດມາດຕະການຕາມກົດໝາຍພາສີຢ່າງເຂັ້ມງວດ.
5. ໃນການຈັດຕັ້ງປະຕິບັດຕົວຈິງຫາກພົບຄວາມຫຍຸ້ງຍາກ, ໃຫ້ລາຍງານກົມພາສີເພື່ອມີທິດຊີ້ນຳໃນການແກ້ໄຂ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບແລະຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮັກສາການຫົວໜ້າກົມພາສີ

ກະຊວງ ການເງິນ ກົມພາສີ

ບຸນປະເສີດ ສີກຸນລະບຸດ